**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ

# ເຕັກນິກການປູກໝາກເຜັດໃຫຍ່



ເອກະສານ ປະກອບການຝຶກອົບຮົມ 01:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບຼອກໂຄລີ
3. ເຕັກນິກການປູກຜັກກະລ່ຳປີ
4. ເຕັກນິກການປູກຜັກກະລ່ຳດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຍອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 01:
# ແນະນຳເຕັກນິກການປູກໝາກເຜັດໃຫຍ່

## ສາລະບານ

ໝາກເຜັດໃຫຍ່(Bell Peppers)........................................................2
ລັກສະນະທົ່ວໄປ ................................................................................ 2
ພັນທີ່ໃຊ້ປູກ ......................................................................................3
ການກຽມດິນ......................................................................................3
ການປູກໝາກເຜັດໃຫຍ່ .......................................................................4
ການບົວລະບັດຮັກສາ .........................................................................5
ການເກັບກ່ຽວ ...................................................................................6

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003



## ການພອນດິນກຳຈັດຫຍ້າ

ການພອນດິນແລະກຳຈັດຫຍ້າໃນໄລຍະທຳອິດ ເມື່ອເວລາຕົ້ນໝາກເຜັດຕັ້ງຕົວໄດ້ຫຼັງຈາກປູກເພາະຈະຊ່ວຍໃຫ້ດິນມີການລະບາຍນ້ຳ ແລະ ອາກາດດີຂື້ນຊ່ວຍບໍ່ໃຫ້ຫຍ້າຍາດແຍ່ງອາຫານ ແລະ ນ້ຳຈາກພືດປູກ. ແຕ່ການປະຕິບັດຕ່າງໆ ຕ້ອງລະມັດລະວັງຢ່າໃຫ້ກະທົບກະເທືອນເຖິງຮາກຂອງພືດ.

## ການເກັບກ່ຽວ

ອາຍຸການເກັບກ່ຽວຂອງຕົ້ນໝາກເຜັດໃຫຍ່ ແຕ່ລະຊະນິດແຕກຕ່າງກັນ ໂດຍທົ່ວໄປແລ້ວ ໝາກເຜັດໃຫຍ່ຈະເລີ່ມເກັບໝາກໄດ້ເມື່ອມີອາຍຸ 30 ຫາ 80 ມື້ ຂື້ນໄປຫຼັງຈາກຍ້າຍປູກ. ການເກັບແມ່ນໃຊ້ວິທີເກັບເອົາເທື່ອລະໝາກ ໂດຍໃຊ້ເລັບມືເດັດເອົາບ່ອນທ້ອຍກ້ານ ໝາກຕໍ່ກັບກິ່ງ.

ແດດຫຼືກເວັ້ນບໍ່ໃຫ້ເບ້ຍຖືກແດດກ້າ ໃນໄລຍະເລີ່ມຍ້າຍປູກໃໝ່ໆ ເພາະຈະເຮັດໃຫ້ເບ້ຍໃຫຍ່ຊ້າ ຫຼື ຫ່ຽວແຫ້ງຕາຍ.

# ການບົວລະບັດຮັກສາ

## ການໃສ່ຝຸ່ນ

ຝຸ່ນທີ່ແນະນໍາຄືຝຸ່ນ N:P:K ສູດ 15- 15- 15 ຫຼື 14- 14 - 21 ໃສ່ໃນ ຈໍານວນ 500 ຫາ 600 ກິໂລ/ຮຕ. ຂຶ້ນກັບຄວາມອຸດົມສົມບູນ ຂອງດິນ, ໂດຍແບ່ງໃສ່ 2 ເທື່ອ: ເທື່ອທີ່1: ໃສ່ໃນປະລິມານເຄິ່ງນຶ່ງ ຂອງຈໍານວນຝຸ່ນທີ່ໃສ່ທັງໝົດໃສ່ຕອນປູກຮອງພື້ນພວນດິນປີກ. ເທື່ອທີ່2: ໃສ່ອີກເຄິ່ງນຶ່ງທີ່ຍັງເຫຼືອເວລາຕົ້ນໝາກເຜັດໄດ້ 30 ມື້ ຫຼັງຈາກຍ້າຍປູກໂຮຍຂ້າງຕົ້ນແລ້ວພວນດິນປີກ.

## ການໃຫ້ນໍ້າ

ຄວນໃຫ້ຢ່າງພຽງພໍສະໝໍ່າສະເໝີຢ່າໃຫ້ປຽກເກີນໄປ. ການໃຫ້ນໍ້າຄວນໃຫ້ທຸກໆວັນຫຼັງຈາກປູກຈົນເຖິ່ງເບ້ຍຕັ້ງຕົວໄດ້ປະມານ 5 ຫາ 6 ອາທິດ. ຫຼັງຈາກນີ້ການໃຫ້ນໍ້າຈຶ່ງລຸດປະມານລົງ ຊຶ່ງອາດຈະໃຫ້ 3 ມື້ / 1 ເທື່ອກໍໄດ້. ຕ້ອງເບິ່ງສະພາບ ຄວາມຊຸ່ມຊື່ນ ຂອງດິນນໍາອີກຢ່າໃຫ້ນໍ້າປຽກ ຫຼື ແຫ້ງເກີນໄປເພາະຈະເຮັດໃຫ້ຕົ້ນໝາກເຜັດຢຸດສະງັກການຈະເລີນເຕີບໂຕ.



# ຂໍ້ແນະນໍາເຕັກນິກການປູກໝາກເຜັດໃຫຍ່



## ໝາກເຜັດໃຫຍ່ (Bell peppers)

ໝາກເຜັດໃຫຍ່ແມ່ນຜັກທີ່ເຮົາໃຊ້ບໍລິໂພກພາກສ່ວນໝາກ, ໃຊ້ປະກອບອາຫານ ໄດ້ຫຼາຍຊະນິດມີລົດຊາດຂ້ອນຂ້າງຫວານບໍ່ເຜັດ.

## ລັກສະນະທົ່ວໄປ

ໝາກເຜັດໃຫຍ່ ເປັນພືດຢູ່ໃນຕະກຸນ Solanaceae ຊື່ວິທະຍາສາດ Capsicum annuum L. var. grossum Sendt. ໝາກເຜັດໃຫຍ່ເປັນພືດອາຍຸສັ້ນມີຊີງຝຸ່ນນ້ອຍສາມາດຈະເລີນເຕີບໂຕໄດ້ໃນດິນເກືອບທຸກຊະນິດ, ແຕ່ມັກດິນຊາຍແກມຕົມທີ່ສາມາດລະບາຍນໍ້າໄດ້ດີມີອິນຊີວັດຖຸຫຼາຍບໍ່ປຽກ ຫຼືຊຸ່ມເກີນໄປ ມີປະຕິກິລິຍາຂອງດິນ (pH) 6,o ຫາ 6,8 ຫຼື ເປັນກົດເລັກນ້ອຍ, ອຸນຫະພູມອາກາດທີ່ເໝາະສົມ 21 ຫາ 45˚C ຫຼື ໃນລະຫວ່າງເດືອນ ພະຈິກ ຫາ ມັງກອນ ມັກອາກາດຂ້ອນຂ້າງໜາວ.

# ພັນທີ່ໃຊ້ປູກ

ໝາກເຜັດໃຫຍ່ທີ່ໃຊ້ປູກສ່ວນຫຼາຍ ເປັນພັນສັ້ນໃຫຍ່ຫາກາງເຊັ່ນ: California wonder 300; Bell Bey hybrid ເປັນຕົ້ນ.

# ການຕຽມດິນ

## ການຕຽມໜານກ້າ

ເຮັດເປັນໜານ ຂຸດດິນໃຫ້ເລິກປະມານ 15 ຫາ 20 ຊຕມ. ຕາກດິນໃຫ້ແຫ້ງ 6 ຫາ 7 ມື້ ຫວ່ານຝຸ່ນຄອກ ຫຼື ຝຸ່ນບົ່ມໃຫ້ຫຼາຍ ແລ້ວພວນດິນໃຫ້ລະອຽດ.

## ການຕຽມໜານປູກ

ຂຸດ ຫຼື ໄຖດິນເລິກປະມານ 15 ຫາ 30 ຊຕມ. ຕາກດິນໄວ້ 7 ຫາ 10 ວັນ, ໃສ່ຝຸ່ນຄອກ ຫຼື ຝຸ່ນ ບົ່ມທີ່ສະຫຼາຍຕົວແລ້ວ ໃນຈຳນວນ 12 ຫາ 13 ໂຕນ/ຮຕ. ຖ້າດິນມີຄວາມເປັນກົດເປັນດັ່ງສູງຄວນໃຊ້ປູນຂາວ ຈຳນວນ 1.200 ຫາ 1.300 ກິໂລ/ຮຕ ເພື່ອຊ່ວຍລຸດຜ່ອນຄວາມເປັນກົດເປັນດ່າງຂອງດິນ. ຈາກນັ້ນກໍປະສົມກັບດິນໃຫ້ມີຂະໜາດນ້ອຍລົງ ຫຼັງໃສ່ປູນຂາວແລ້ວ 15 ຫາ 20 ມື້ ຈິ່ງປູກໄດ້.





## ການກ້າເບ້ຍ

ຫຼັງຈາກຕຽມໜານກ້າ ແລ້ວໃຫ້ຫວ່ານເມັດພັນໃຫ້ກະຈາຍທົ່ວໜານ ຫຼື ໂຮຍເປັນແຖວ, ຫ່າງກັນລະ ຫວ່າງແຖວ 15 ຊຕມ. ເລິກປະມານ 1 ຊຕມ. ໂຮຍເມັດພັນລົງ ຕາມແຖວແລ້ວປົກດ້ວຍຝຸ່ນຄອກ ຫຼື ຝຸ່ນບົ່ມ ຫຼື ດິນທີ່ລະອຽດກໍໄດ້ໃຫ້ໜາປະມານ 0,5 ຫາ 1 ຊຕມ. ຫົດນ້ຳໃຫ້ຊຸ່ມແລ້ວປົກດ້ວຍເຟືອງ ຫຼື ຫຍ້າແຫ້ງບາງໆ. ຫຼັງຈາກເບ້ຍງອກໄດ້ 15 ຫາ 20 ວັນ ໃຫ້ຖອນແຍກຕົ້ນທີ່ບໍ່ສົມບູນ ຫຼື ຕົ້ນອ່ອນແອອອກ, ພ້ອມກັນນັ້ນພະຍາຍາມຈັດໄລຍະຫ່າງຕົ້ນ ໃຫ້ຫ່າງກັນ 10 ຊຕມ.

## ການປູກໝາກເຜັດໃຫຍ່

ຕົ້ນໝາກເຜັດໃຫຍ່ເປັນພືດທີ່ຊອບຝຸ່ນນ້ອຍ ການປູກໃຫ້ໃຊ້ໄລຍະຫ່າງລະຫວ່າງ ຕົ້ນຕໍ່ຕົ້ນ 40 ຊຕມ. ລະຫວ່າງແຖວຕໍ່ແຖວ 60 ຊຕມ. ຫຼັງຈາກຕຽມໜານປູກ ແລະ ເບ້ຍໄດ້ຂະໜາດດີແລ້ວກໍປູກໄດ້ເລີຍ. ເບ້ຍທີ່ຈະຍ້າຍໄປປູກ ຄວນເປັນເບ້ຍທີ່ແຂງແຮງມີອາຍຸປະມານ 30 ຫາ 40 ມື້, ສູງປະມານ 10 ຫາ 15 ຊຕມ. ການຫຼົກເບ້ຍຄວນໃຫ້ມີດິນຕິດຮາກຫຼາຍທີ່ສຸດພ້ອມດ້ວຍຄວາມລະມັດລະວັງເບ້ຍທີ່ຍ້າຍມາຕ້ອງປູກທັນທີ. ການປູກຄວນບີບດິນຢູ່ອ້ອມຕົ້ນໃຫ້ແໜ້ນລະວັງຢ່າໃຫ້ຮາກຂາດເພາະຈະເຮັດ ໃຫ້ຕົ້ນລົ້ມໄດ້ງ່າຍ ເນື່ອງຈາກວ່າຕົ້ນໝາກເຜັດມີຮາກແຜ່ກະຈາຍຢູ່ໜ້າດິນ. ຫຼັງຈາກປູກແລ້ວຫົດນ້ຳໃຫ້ຊຸ່ມໃຊ້ເຟືອງ ຫຼື ຫຍ້າແຫ້ງປົກຄຸມດິນ ຄວນເຮັດຮ້ານບັງ